Vientiane Times
ພາສາລາວ
LAO PRESS IN FOREIGN LANGUAGES
Vientiane Times Phonpapao Village, Unit 32, Sisattanak District,
P.O.Box: 5723 Vientiane, Lao PDR.
Tel: (856-21) 336042, 336048, Fax: (856-21) 336041.
Email: info@vientianetimes.la





Search here ...





# ລັດຖະບານ ລາວ ແລະ ບໍລິສັດຊີຈີເອັນ ເອເນີຈີ ເຕັກໂນໂລຢີຮ່ວມມື ພັດທະນາໂຄງການເຊື່ອມຕໍ່ພະລັງງານສະອາດ ພາກເໜືອໄລຍະທີ II

ພາຍໃນປະເທດ

10 August 2024

1 month ago

0 220 Less than a minute

ລັດຖະບານແຫ່ງສປປ ລາວ ແລະ ບໍລິສັດຊີຈີເອັນ ເອເນີຈີ ເຕັກໂນໂລຢີເຕັກໂນໂລຢີ(ລາວ)ຈຳກັດຮ່ວມມື ພັດທະນາໂຄງການເຊື່ອມຕໍ່ພະລັງງານສະອາດ ພາກເໜືອໄລຍະທີ II ພະລັງງານແສງຕາເວັນ 580 MW ຢູ່ແຂວງຫຼວງນໍ້າທາ ແລະ ໂຄງການໄຟຟ້າພະລັງງານແສງຕາເວັນ 420 MW ຢູ່ແຂວງອຸດົມໄຊ ບົນພື້ນຖານໂຄງການໄລຍະທີ I ຂອງໂຄງການໄຟຟ້າພະລັງງານແສງຕາເວັນ 1.000 MW.

ພິທີ ເຊັນສັນຍາພັດທະນາໂຄງການດັ່ງກ່າວໄລຍະທີ II ນີ້ໄດ້ຈັດຂຶ້ນເມື່ອມໍ່ໆມານີ້ ພະລັງງານແສງຕາເວັນ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ບໍລິສັດດັ່ງກ່າວ ໂດຍການເປັນສັກຂີພະຍານຂອງ ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແລະ ທ່ານ ນາງ ຟາງຮົງ (Ms. Fang Hong) ເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ.

ໂຄງການເຊື່ອມຕໍ່ພະລັງງານສະອາດພາກເໜືອ ສປປ ລາວ ແມ່ນໂຄງການທີ່ສຳຄັນຂອງບໍລິສັດ ຊີຈີເອັນ ໃນການປະຕິບັດຂໍ້ລິເລີ່ມ “ໜຶ່ງແລວໜຶ່ງເສັ້ນທາງ” ແລະ ຊ່ວຍກໍ່ສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ເປັນໂຄງການສະໜອງໄຟຟ້າທີ່ສຳຄັນ ໃນການສົ່ງເສີມການເຊື່ອມຕໍ່ໄຟຟ້າແມ່ນໍ້າລ້ານຊ້າງ -ແມ່ນໍ້າຂອງ. ໂຄງການດັ່ງກ່າວ, ກວມເອົາ 3 ແຂວງພາກເໜືອຂອງ ສປປ ລາວ ຄື: ແຂວງອຸດົມໄຊ, ແຂວງຜົ້ງສາລີ ແລະ ແຂວງຫລວງນໍ້າທາ ໂດຍຈະສ້າງຖານພະລັງງານສະອາດແບບປະສົມປະສານ ລວມມີພະລັງງານລົມ, ພະລັງງານແສງຕາເວັນ ແລະ ພະລັງງານນໍ້າກັກເກັບ ແລະ ອື່ນໆ .

ປັດຈຸບັນ, ໂຄງການໄຟຟ້າພະລັງງານແສງຕາເວັນ 1.000 MW ຢູ່ແຂວງອຸດົມໄຊ ໄລຍະທີ I ໄດ້ເຂົ້າສູ່ໄລຍະກະກຽມການລົງມືກໍ່ສ້າງ, ການເຊັນສັນຍາພັດທະນາໂຄງການ ໃນໄລຍະທີ II ຂອງໂຄງການພະລັງງານລົມ ແລະ ພະລັງງານແສງຕາເວັນ 580 MW ຢູ່ແຂວງຫຼວງນໍ້າທາ ແລະ ໂຄງການໄຟຟ້າພະລັງງານແສງຕາເວັນ 420 MW ຢູ່ແຂວງ ອຸດົມໄຊ ຈະຊ່ວຍເຮັດໃຫ້ຄວາມສາມາດ ຂອງການຜະລິດພະລັງງານໃໝ່ຂອງ ສປ ຈີນ ທີ່ມີຈຸດເດັ່ນເຂົ້າມາໃນ ສປປ ລາວ; ຫັນປ່ຽນພະລັງງານ ແລະ ຍົກລະດັບລະບົບຕ່ອງໂສ້ອຸດສາຫະກຳຂອງ ສປປ ລາວ ເພີ່ມບາດກ້າວໜຶ່ງ, ພ້ອມທັງຊ່ວຍສ້າງ “ແບັດເຕີລີພະລັງງານສະອາດອາຊີຕາເວັນອອກສຽງໃຕ້” ໃນ ສປປ ລາວ, ປັບລະດັບການພົວພັນເຊື່ອມຕໍ່ພະລັງງານໄຟຟ້າລະຫວ່າງ ສປ ຈີນ ແລະ ສປປ ລາວ, ລົງເລິກການກໍ່ສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຊ່ວຍສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນຂອງສອງປະເທດຢ່າງແທ້ຈິງ.

ແຫຼ່ງຂ່າວ: ກົດຕາ

## Related Articles




ຫ້າມການສັນຈອນເສັ້ນທາງຊົ່ວຄາວ ສຳລັບລົດບັນທຸກ ຫີນ, ແຮ່, ຊາຍ ແລະ ດິນ

16 September 2024




ອາຊຽນ ຫາລື ເຈລະຈາຍົກລະດັບສັນຍາການຄ້າດ້ານສິນຄ້າອາຊຽນ

16 September 2024




ພາຍຸໄຕ້ຝຸ່ນຍະກິ ສົ່ງຜົນກະທົບໃຫ້ປະເທດອາຊີອາຄະເນ ຢ່າງຕໍ່ເນື່ອງ

16 September 2024

## Leave a Reply

You must be logged in to post a comment.

ຂ່າວທີ່ໄດ້ຮັບຄວາມນິຍົມ

ພວກເຮົາ ອ່ານຂ່າວພາສາອື່ນໆ ເຟສບຸກ ວິດີໂອ ສະບັບກ່ອນ ໜັງສືພິມ ເວັບອື່ນ ຄູ່ຮ່ວມ

ລົງໂຄສະນາ ຈອງອ່ານຂ່າວ ຈ່າຍຜ່ານເວັບໄຊ ເຂົ້າລະບົບ